ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

2984
ເລກທີ................./ກປ
25 SEP 2014
ນະຄອນຫຼວງວຽງຈັນ, ວັນທີ.......................

# ຂໍ້ຕົກລົງ
## ຂອງລັດຖະມົນຕີ
## ວ່າດ້ວຍການສ້າງຕັ້ງ ແລະຄຸ້ມຄອງກຸ່ມຜູ້ຜະລິດກະສິກຳ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 19/ນຍ, ລົງວັນທີ 05 ກັນຍາ2013 ວ່າດ້ວຍການປັບປຸງ ແລະກໍ່ສ້າງວິສາຫະກິດໃນໄລຍະໃໝ່;
- ອີງຕາມໜັງສືສະເໜີຂອງ ກົມສົ່ງເສີມກະສິກຳ ແລະສະຫະກອນ ເລກທີ 2971/ກສກສ, ລົງວັນທີ 19 ກັນຍາ 2014.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະມາດຕະການ ໃນການຈັດຕັ້ງ ແລະການເຄື່ອນໄຫວຂອງກຸ່ມຜູ້ຜະລິດກະສິກຳ ເພື່ອຊຸກຍູ້ສົ່ງເສີມການຜະລິດຂອງຊາວກະສິກອນຂະໜາດນ້ອຍ ໃຫ້ເຂັ້ມແຂງ, ກຽມພ້ອມກ້າວຂຶ້ນເປັນສະຫະກອນການຜະລິດ, ສ້າງລາຍຮັບ ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ, ແນໃສ່ແກ້ໄຂຄວາມທຸກຍາກ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມຂອງຊາດ.

### ມາດຕາ 2 ກຸ່ມຜູ້ຜະລິດກະສິກຳ

ກຸ່ມຜູ້ຜະລິດກະສິກຳ ແມ່ນການຈັດຕັ້ງຂອງຊາວກະສິກອນຂະໜາດນ້ອຍ ທີ່ໄດ້ຜ່ານຂະບວນການກຸ່ມຮຽນຮູ້ມາແລ້ວ ພ້ອມກັນສະໝັກໃຈສ້າງຕັ້ງຂຶ້ນ ເພື່ອຮ່ວມມືຊ່ວຍເຫຼືອຊຶ່ງກັນ ແລະກັນໃນການວາງແຜນການຜະລິດ, ຊ່ວຍກັນຄ້ຳປະກັນແຫຼ່ງທຶນ, ຮ່ວມກັນຊື້ປັດໃຈການຜະລິດ, ການປຸງແຕ່ງ, ຮ່ວມກັນຂາຍຜົນຜະລິດ ແລະຊ່ວຍເຫຼືອກັນທາງດ້ານສະຫວັດດີການສັງຄົມລະຫວ່າງສະມາຊິກ ແລະຄອບຄົວຂອງສະມາຊິກດ້ວຍກັນ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. ກຸ່ມ ໝາຍເຖິງ ການລວມຕົວກັນຂອງຊາວກະສິກອນ ດ້ວຍຄວາມສະໝັກໃຈເພື່ອສ້າງກິດຈະການຮ່ວມກັນດ້ານການປູກ, ການລ້ຽງ, ການປະມົງ, ການປຸງແຕ່ງ ແລະບໍລິການດ້ານກະສິກຳ;

2. ກຸ່ມປູກ ໝາຍເຖິງ ການລວມຕົວກັນຂອງຊາວກະສິກອນ ທີ່ປະກອບກິດຈະການປູກຝັງເປັນອາຊີບຕົ້ນຕໍ ເຊັ່ນ: ການປູກເຂົ້າ, ປູກຜັກ, ປູກພືດລົ້ມລຸກ-ພືດຢືນຕົ້ນ, ປູກໄມ້ອຸດສາຫະກໍາ, ປູກໄມ້ໃຫ້ໝາກ, ກຸ່ມເຄື່ອງປ່າຂອງດົງ ແລະພືດເສດຖະກິດອື່ນ;

3. ກຸ່ມລ້ຽງ ໝາຍເຖິງ ການລວມຕົວກັນຂອງຊາວກະສິກອນ ທີ່ປະກອບກິດຈະການລ້ຽງສັດເປັນອາຊີບຕົ້ນຕໍ ເຊັ່ນ: ການລ້ຽງສັດປີກ, ກຸ່ມລ້ຽງງົວ - ຄວາຍ, ກຸ່ມລ້ຽງແກະ - ແບ້, ກຸ່ມລ້ຽງສັດນໍ້າ ແລະກຸ່ມລ້ຽງສັດເສດຖະກິດອື່ນ;

4. ກຸ່ມປະມົງ ໝາຍເຖິງ ກຸ່ມຜູ້ປະກອບການລ້ຽງ, ພັດທະນາ ແລະຫາປາເປັນອາຊີບຕົ້ນຕໍ ຫຼືເປັນຊາວປະມົງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການປະມົງ ເລກທີ 03/ສພຊ, ລົງວັນທີ 9 ກໍລະກົດ 2009;

5. ກຸ່ມປຸງແຕ່ງ ໝາຍເຖິງ ກຸ່ມຜູ້ປຸງແຕ່ງຜະລິດຕະພັນກະສິກໍາ ແລະປ່າໄມ້;

6. ກຸ່ມບໍລິການ ໝາຍເຖິງ ກຸ່ມບໍລິການປັດໄຈການຜະລິດ, ບໍລິການຮັບຊື້ - ຂາຍຜົນຜະລິດ;

7. ກຸ່ມຮຽນຮູ້ ໝາຍເຖິງ ການລວມຕົວກັນຂອງຊາວກະສິກອນ ທີ່ເຮັດການຜະລິດໃນກິດຈະການດຽວກັນ ເພື່ອແລກປ່ຽນປະສົບການ ແລະຮຽນຮູ້ດ້ານເຕັກນິກການຜະລິດນໍາກັນ;

8. ກະສິກໍາ ໝາຍເຖິງ ການປູກຝັງ, ການລ້ຽງສັດ ແລະການປະມົງ;

9. ຊາວກະສິກອນ ໝາຍເຖິງ ຜູ້ທີ່ເຮັດການຜະລິດກະສິກໍາເປັນອາຊີບ ເຊັ່ນ: ປູກຝັງ, ລ້ຽງສັດ ແລະການປະມົງ;

10. ຄະນະກໍາມະການບໍລິຫານກຸ່ມ ໝາຍເຖິງ ຄະນະບຸກຄົນທີ່ເປັນຕົວແທນຂອງສະມາຊິກກຸ່ມ ຊຶ່ງໄດ້ຮັບການເລືອກຕັ້ງຈາກກອງປະຊຸມສະມາຊິກ ໃຫ້ດໍາລົງຕໍາແໜ່ງເປັນຄະນະບໍລິຫານງານ ຕາມທີ່ໄດ້ກໍານົດໄວ້ໃນກົດລະບຽບຂອງກຸ່ມ;

11. ພັນທະຂອງສະມາຊິກ ໝາຍເຖິງ ໜ້າທີ່ ແລະຄວາມຮັບຜິດຊອບຂອງສະມາຊິກ ທີ່ຈະຕ້ອງໄດ້ປະຕິບັດຕາມກົດລະບຽບຂອງກຸ່ມ ແລະການມອບໝາຍຂອງຄະນະກໍາມະການບໍລິຫານກຸ່ມ;

12. ສິນຄ້າ ໝາຍເຖິງ ຜົນຜະລິດທີ່ໄດ້ຈາກການປູກ, ການລ້ຽງ ແລະການປະມົງ ທີ່ນໍາໄປແລກປ່ຽນ ຫຼືຊື້-ຂາຍ ຢູ່ໃນທ້ອງຕະຫຼາດ;

13. ຕະຫຼາດ ໝາຍເຖິງ ສະຖານທີ່ພົບພໍ້ ຫຼືພົບກັນລະຫວ່າງຜູ້ຊື້ ກັບຜູ້ຂາຍ ເພື່ອໃຊ້ຕໍ່ລອງແລກປ່ຽນ ຫຼືຊື້ - ຂາຍສິນຄ້ານໍາກັນ.

**ມາດຕາ 4 ຫຼັກການພື້ນຖານໃນການສ້າງຕັ້ງ ແລະການຄຸ້ມຄອງກຸ່ມ**

ການສ້າງຕັ້ງ ແລະການຄຸ້ມຄອງກຸ່ມຜູ້ຜະລິດກະສິກໍາ ຕ້ອງປົບພື້ນຖານຫຼັກການ ດັ່ງນີ້:

1. ມີຄວາມສະໝັກໃຈ;
2. ຄຸ້ມຄອງແບບປະຊາທິປະໄຕ;
3. ມີຜົນປະໂຫຍດຮ່ວມກັນ;
4. ໂປ່ງໃສ ແລະສາມາດກວດສອບໄດ້;
5. ໄດ້ຮັບການອະນຸມັດສ້າງຕັ້ງ ຕາມຂໍ້ຕົກລົງສະບັບນີ້.

**ມາດຕາ 5 ນະໂຍບາຍຂອງລັດຕໍ່ກຸ່ມ**

ລັດ ສົ່ງເສີມການພັດທະນາກຸ່ມ ດ້ວຍມາດຕະການປະຕິບັດຕົວຈິງທີ່ເອື້ອປະໂຫຍດ ແລະມີປະສິດທິຜົນ ເພື່ອສ້າງເງື່ອນໄຂ ຫຼືໂອກາດທີ່ດີໃຫ້ແກ່ການຜະລິດ ແລະການບໍລິການດ້ານກະສິກໍາ ແກ່ສະມາຊິກ ແລະຄອບຄົວຂອງສະມາຊິກໃນດ້ານຕ່າງໆ ດັ່ງນີ້:

1. ຊຸກຍູ້ສົ່ງເສີມທາງດ້ານເຕັກນິກວິຊາການ ແລະຂໍ້ມູນຂ່າວສານ;
2. ຊຸກຍູ້ສົ່ງເສີມເຂົ້າຫາແຫຼ່ງທຶນ ແລະການຕະຫຼາດ;
3. ຫຼຸດຜ່ອນ ຫຼືຍົກເວັ້ນພາສີໃນການນໍາເຂົ້າປັດໄຈການຜະລິດ ແລະສົ່ງອອກຜົນຜະລິດ ຕາມກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍສ່ວຍສາອາກອນ ແລະນະໂຍບາຍອື່ນຂອງລັດ ທີ່ປະກາດໃຊ້ໃນແຕ່ລະໄລຍະ;
4. ສ້າງເງື່ອນໄຂອໍານວຍດ້ານພື້ນຖານໂຄງລ່າງ ເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ.

ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທີ່ກ່ຽວຂ້ອງກັບກຸ່ມຜູ້ຜະລິດກະສິກຳ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ, ເງື່ອນໄຂ ແລະການອະນຸຍາດສ້າງຕັ້ງກຸ່ມ

ມາດຕາ 7 ປະເພດກຸ່ມ

ກຸ່ມຜູ້ຜະລິດກະສິກຳໃນ ສປປ ລາວ ປະກອບດ້ວຍ:

1. ກຸ່ມປູກ;
2. ກຸ່ມລ້ຽງ;
3. ກຸ່ມປະມົງ;
4. ກຸ່ມປຸງແຕ່ງ;
5. ກຸ່ມບໍລິການ.

ມາດຕາ 8 ເງື່ອນໄຂໃນການສ້າງຕັ້ງ

ກຸ່ມຊາວກະສິກອນ ທີ່ມີຈຸດປະສົງສ້າງຕັ້ງກຸ່ມໃດໜຶ່ງ ຕາມມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້:

1. ມີຊາວກະສິກອນທີ່ມີກິດຈະກຳດຽວກັນ ຢ່າງໜ້ອຍ ເຈັດ ຄົນຂຶ້ນໄປ ຊຶ່ງມີຈຸດປະສົງລວມກັນເປັນກຸ່ມ ເພື່ອຊ່ວຍເຫຼືອຊຶ່ງກັນ ແລະກັນ ໃນຂະບວນການຜະລິດ ແລະການບໍລິການກະສິກຳ;
2. ມີຄະນະລິເລີ່ມກະກຽມ ເພື່ອຈັດຕັ້ງກຸ່ມຢ່າງໜ້ອຍ ສາມ ຄົນຂຶ້ນໄປ.

ມາດຕາ 9 ຂັ້ນຕອນການຂໍອະນຸຍາດ ແລະພິຈາລະນາສ້າງຕັ້ງກຸ່ມ

ພາຍຫຼັງຄະນະລິເລີ່ມໄດ້ຈັດກອງປະຊຸມ ເພື່ອຮັບຮອງເອົາກົດລະບຽບພາຍໃນແລ້ວ, ຖ້າມີຈຸດປະສົງສ້າງຕັ້ງກຸ່ມ ຕ້ອງປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ເພື່ອສະເໜີຕໍ່ຫ້ອງການກະສິກຳ ແລະປ່າໄມ້ເມືອງ ໂດຍຜ່ານໜ່ວຍງານສົ່ງເສີມກະສິກຳ ແລະສະຫະກອນພິຈາລະນາ.

ເມື່ອໄດ້ຮັບເອກສານສະເໜີສ້າງຕັ້ງກຸ່ມແລ້ວ, ໜ່ວຍງານສົ່ງເສີມກະສິກຳ ແລະສະຫະກອນ ຕ້ອງສົມທົບກັບພາກສ່ວນກ່ຽວຂ້ອງຂອງຫ້ອງການກະສິກຳ ແລະປ່າໄມ້ເມືອງ ເພື່ອຄົ້ນຄວ້າພິຈາລະນາແລະແຈ້ງຕອບພາຍໃນກຳນົດເວລາ ສິບຫ້າ ວັນຕາມແຕ່ລະກໍລະນີ ດັ່ງນີ້:

1. ຖ້າການສະເໜີດັ່ງກ່າວ ຖືກຕ້ອງຄົບຖ້ວນຕາມເງື່ອນໄຂ, ຫ້ອງການກະສິກຳ ແລະປ່າໄມ້ເມືອງຕ້ອງນຳສະເໜີເຈົ້າເມືອງ ບ່ອນທີ່ກຸ່ມຈະຕັ້ງຢູ່ ເພື່ອອະນຸມັດສ້າງຕັ້ງ;
2. ຖ້າການສະເໜີດັ່ງກ່າວ ບໍ່ຖືກຕ້ອງຄົບຖ້ວນຕາມເງື່ອນໄຂ, ຫ້ອງການກະສິກຳ ແລະປ່າໄມ້ເມືອງ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມທັງອະທິບາຍເຖິງເຫດຜົນຂອງການບໍ່ອະນຸຍາດ.

ໃບອະນຸຍາດສ້າງຕັ້ງກຸ່ມ ມີອາຍຸການນຳໃຊ້ ສາມ ປີ, ກ່ອນໝົດກຳນົດ ສາມ ເດືອນ ກຸ່ມທີ່ມີຈຸດປະສົງຢາກສືບຕໍ່ດຳເນີນກິດຈະການ ທີ່ໄດ້ຮັບອະນຸມັດແລ້ວນັ້ນ ຕ້ອງສະເໜີຕໍ່ຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງເພື່ອພິຈາລະນາ.

ມາດຕາ 10 ເອກະສານປະກອບຂໍອະນຸມັດສ້າງຕັ້ງກຸ່ມ

ເອກະສານປະກອບຂໍອະນຸມັດສ້າງຕັ້ງກຸ່ມ ປະກອບດ້ວຍ:

1. ໃບຄຳຮ້ອງ;
2. ບັນຊີລາຍຊື່ຄະນະກຳມະການບໍລິຫານ ແລະສະມາຊິກກຸ່ມ;
3. ໂຄງຮ່າງການຈັດຕັ້ງກຸ່ມ;

4. ກົດລະບຽບຂອງກຸ່ມ;
5. ແຫຼ່ງທຶນຂອງກຸ່ມ;
6. ແຜນການເຄື່ອນໄຫວຂອງກຸ່ມ.

**ມາດຕາ 11 ກົດລະບຽບຂອງກຸ່ມ**

ກົດລະບຽບຂອງກຸ່ມ ຕ້ອງລະບຸເຖິງເນື້ອໃນພື້ນຖານ ດັ່ງນີ້:

1. ຊື່ຂອງກຸ່ມ;
2. ຈຸດປະສົງຂອງກຸ່ມ;
3. ທີ່ຕັ້ງຫ້ອງການ;
4. ແຫຼ່ງທຶນ ແລະວິທີການປະກອບທຶນ;
5. ການບໍລິຫານ, ຄຸ້ມຄອງບັນຊີ ແລະການເງິນ;
6. ຄຸນວຸດທິຂອງສະມາຊິກ, ການຮັບສະມາຊິກ, ສິດ, ພັນທະ ແລະໜ້າທີ່ຂອງສະມາຊິກ;
7. ກອງປະຊຸມຂອງສະມາຊິກ;
8. ການເລືອກຕັ້ງ, ການດຳລົງຕຳແໜ່ງ, ການພົ້ນຈາກຕຳແໜ່ງ ແລະໜ້າທີ່ຂອງຄະນະກຳມະການບໍລິຫານກຸ່ມ;
9. ການເລືອກຕັ້ງຄະນະກວດກາ;
10. ການປັບປຸງ, ປ່ຽນແປງ ແລະເພີ່ມເຕີມກົດລະບຽບຂອງກຸ່ມ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ, ກອງປະຊຸມ ແລະສະມາຊິກກຸ່ມ

**ມາດຕາ 12 ໂຄງປະກອບການຈັດຕັ້ງຂອງກຸ່ມ**

ໂຄງປະກອບຂອງກຸ່ມ ປະກອບດ້ວຍ:

1. ກອງປະຊຸມຂອງກຸ່ມ;
2. ຄະນະກຳມະການບໍລິຫານກຸ່ມ;
3. ຄະນະກວດກາກຸ່ມ;
4. ສະມາຊິກກຸ່ມ.

**ມາດຕາ 13 ກອງປະຊຸມຂອງກຸ່ມ**

ກອງປະຊຸມຂອງກຸ່ມ ແມ່ນການຈັດຕັ້ງສູງສຸດຂອງກຸ່ມ ຊຶ່ງປະກອບດ້ວຍ: ກອງປະຊຸມສາມັນ ແລະກອງປະຊຸມວິສາມັນ.

ກອງປະຊຸມສາມັນ ເປີດຂຶ້ນຢ່າງໜ້ອຍປີລະຄັ້ງ, ສ່ວນກອງປະຊຸມວິສາມັນ ຈະເປີດຂຶ້ນເມື່ອໃດກໍ່ໄດ້ ຕາມການຮຽກເຊີນຂອງຄະນະບໍລິຫານກຸ່ມ ແລະສາມາດນຳເອົາທຸກບັນຫາທີ່ຈຳເປັນເຂົ້າພິຈາລະນາ.

**ມາດຕາ 14 ຄະນະກຳມະການບໍລິຫານກຸ່ມ**

ຄະນະກຳມະການບໍລິຫານກຸ່ມ ປະກອບດ້ວຍ: ປະທານ, ຮອງປະທານ ແລະກຳມະການບໍລິຫານ, ຈຳນວນຄະນະກຳມະການບໍລິຫານ ຕ້ອງແທດເໝາະກັບຈຳນວນສະມາຊິກ ແຕ່ບໍ່ໃຫ້ຫຼຸດສາມຄົນແລະບໍ່ເກີນ ເຈັດ ຄົນ ໂດຍເປັນຈຳນວນຄີກ ແລະໄດ້ຮັບການເລືອກຕັ້ງມາຈາກສະມາຊິກກຸ່ມເທົ່ານັ້ນ.

ຄະນະກຳມະການບໍລິຫານກຸ່ມ ເປັນຜູ້ບໍລິຫານວຽກທຸກຢ່າງຂອງກຸ່ມ ແລະເປັນຕົວແທນຂອງກຸ່ມໃນການພົວພັນວຽກງານກັບບຸກຄົນພາຍນອກ ໂດຍມີການແບ່ງປັນວຽກງານໃຫ້ແຕ່ລະຄົນຮັບຜິດຊອບ.

ຄະນະກຳມະການບໍລິຫານມີອາຍຸການ ສາມ ປີ.

### ມາດຕາ 15 ຂອບເຂດສິດ ແລະໜ້າທີ່ຂອງຄະນະກຳມະການບໍລິຫານກຸ່ມ

ຄະນະກຳມະການບໍລິຫານກຸ່ມ ມີສິດ ແລະໜ້າທີ່ຕົ້ນຕໍ ດັ່ງນີ້:

1. ສ້າງແຜນການຜະລິດຕາມລະດູການ;
2. ຈັດຫາປັດໄຈການຜະລິດ ມາບໍລິການໃຫ້ສະມາຊິກ;
3. ຕິດຕາມຊຸກຍູ້ການຜະລິດ, ການບົວລະບັດຮັກສາ, ການປຸງແຕ່ງ ແລະການຕະຫຼາດ;
4. ປົກປ້ອງສິດ ແລະຜົນປະໂຫຍດຂອງສະມາຊິກ;
5. ຮຽກປະຊຸມສາມັນປະຈຳປີ,ກອງປະຊຸມວິສາມັນໃນກໍລະນີຈຳເປັນ ເພື່ອຕິດຕາມ, ກວດກາ ແລະສະຫຼຸບລາຍງານການເຄື່ອນໄຫວຂອງກຸ່ມ;
6. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 16 ຄະນະກວດກາກຸ່ມ

ຄະນະກວດກາກຸ່ມ ປະກອບດ້ວຍ: ປະທານ, ຮອງປະທານແລະກຳມະການຈຳນວນໜຶ່ງ ຊຶ່ງໄດ້ຮັບການເລືອກຕັ້ງຈາກກອງປະຊຸມຂອງກຸ່ມ.

ຈຳນວນຄະນະກວດກາກຸ່ມບໍ່ໃຫ້ຫຼຸດສາມຄົນ ແລະບໍ່ເກີນຫ້າຄົນ.

### ມາດຕາ 17 ສິດ ແລະໜ້າທີ່ຂອງຄະນະກວດກາກຸ່ມ

ຄະນະກວດກາກຸ່ມມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ກວດກາການປະຕິບັດວຽກງານຂອງກຳມະການບໍລິຫານ ກ່ຽວກັບການນຳໃຊ້ທຶນ ແລະຊັບສົມບັດຕ່າງໆຕາມກົດລະບຽບ ແລະມະຕິກອງປະຊຸມຂອງສະມາຊິກກຸ່ມ;
2. ກວດກາຄຸນນະພາບ ແລະມາດຕະຖານການຜະລິດຂອງສະມາຊິກ ຕາມລະບຽບກົດໝາຍ;
3. ເຂົ້າຮ່ວມກອງປະຊຸມຂອງຄະນະກຳມະການບໍລິຫານ ແລະກອງປະຊຸມຂອງສະມາຊິກກຸ່ມ;
4. ລາຍງານຜົນຂອງການກວດກາ ຕໍ່ຄະນະກຳມະການບໍລິຫານ ແລະຕໍ່ກອງປະຊຸມຂອງສະມາຊິກກຸ່ມ;
5. ທວງໃຫ້ຜູ້ກ່ຽວຂ້ອງໃນກຸ່ມສະໜອງເອກະສານ ແລະຂໍ້ມູນຕ່າງໆ ທີ່ຕ້ອງການເພື່ອຮັບໃຊ້ວຽກງານກວດກາ ພ້ອມທັງປົກປັກຮັກສາຄວາມລັບກ່ຽວກັບຂໍ້ມູນດັ່ງກ່າວ;
6. ຮຽກໂຮມກອງປະຊຸມວິສາມັນ ໃນກໍລະນີມີການລະເມີດກົດລະບຽບ ຫຼືມະຕິກອງປະຊຸມຂອງສະມາຊິກກຸ່ມ ຫຼືບັນຫາທີ່ມີຜູ້ສະເໜີໃຫ້ປັບປຸງແກ້ໄຂ ແຕ່ບໍ່ໄດ້ຮັບການແກ້ໄຂ ຫຼືແກ້ໄຂແລ້ວແຕ່ບໍ່ມີປະສິດທິຜົນ ຫຼືຄະນະກຳມະການບໍລິຫານບໍ່ຮຽກປະຊຸມ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງກຸ່ມ;
7. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 18 ຄວາມຮັບຜິດຊອບຕໍ່ຜົນເສຍຫາຍ

ຄະນະກຳມະການບໍລິຫານ,ຜູ້ກວດກາມີຄວາມຮັບຜິດຊອບຕໍ່ຜົນເສຍຫາຍທັງໝົດທີ່ເກີດຂຶ້ນຈາກການກະທຳຂອງຕົນເອງໃນກໍລະນີປະຕິບັດເກີນຂອບເຂດສິດ, ໜ້າທີ່ໆໄດ້ຮັບມອບໝາຍ ຫຼືສໍ້ໂກງເພື່ອຜົນປະໂຫຍດຂອງຕົນເອງ, ຄະນະ ຕາມລະບຽບກົດໝາຍ.

### ມາດຕາ 19 ສະມາຊິກກຸ່ມ

ສະມາຊິກກຸ່ມ ແມ່ນບຸກຄົນທີ່ບັນລຸນິຕິພາວະ, ມີສຳມະໂນຄົວ, ດຳລົງຊີວິດຢູ່ໃນທ້ອງຖິ່ນທີ່ກຸ່ມນັ້ນດຳເນີນການຢູ່ ແລະໄດ້ສະໝັກເຂົ້າເປັນສະມາຊິກ ຕາມກົດລະບຽບຂອງກຸ່ມ.

ສະມາຊິກກຸ່ມແຕ່ລະຄົນ ຕ້ອງຖືຮຸ້ນຢ່າງໜ້ອຍ ໜຶ່ງ ຮຸ້ນ ແຕ່ບໍ່ໃຫ້ເກີນ ຊາວສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດ ແລະປະຕິບັດຫຼັກການໜຶ່ງຄົນມີໜຶ່ງສຽງໃນການລົງຄະແນນ.

ການເປັນສະມາຊິກກຸ່ມຈະສິ້ນສຸດລົງກໍຕໍ່ເມື່ອ: ເສຍຊີວິດ, ເປັນບ້າ-ເສຍຈິດ, ສະໝັກໃຈລາອອກ, ລະເມີດກົດລະບຽບກຸ່ມຢ່າງຮ້າຍແຮງ ແລະບໍ່ຖອກຮຸ້ນ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດລະບຽບຂອງກຸ່ມ.

**ມາດຕາ 20 ສິດ ແລະໜ້າທີ່ຂອງສະມາຊິກກຸ່ມ**

ສະມາຊິກກຸ່ມ ມີສິດ ແລະໜ້າທີ່ຕົ້ນຕໍ ດັ່ງນີ້:

1. ເຊື່ອມຊຶມ ແລະປະຕິບັດແນວທາງຂອງພັກ,ນະໂຍບາຍ, ລະບຽບກົດໝາຍຂອງລັດ ດ້ານວຽກງານກະສິກຳ, ກົດລະບຽບຂອງກຸ່ມ ແລະການຊີ້ນຳຂອງກຳມະການບໍລິຫານກຸ່ມ;
2. ຮັກສາຄວາມສາມັກຄີລະຫວ່າງສະມາຊິກກຸ່ມດ້ວຍກັນ;
3. ດຳເນີນການຜະລິດ, ບົວລະບັດຮັກສາ ຕິດພັນກັບການນຳໃຊ້ເຕັກນິກວິທະຍາການອັນໃໝ່;
4. ເຂົ້າຮ່ວມການຝຶກອົບຮົມຍົກລະດັບຄວາມຮູ້ ທາງດ້ານການປູກ, ການລ້ຽງ ແລະການປຸງແຕ່ງ ໃຫ້ສູງຂຶ້ນເທື່ອລະກ້າວ;
5. ເລືອກຕັ້ງ ແລະລົງສະໝັກຮັບເລືອກຕັ້ງ ເປັນກຳມະການບໍລິຫານກຸ່ມ ຫຼືກຳມະການກວດກາກຸ່ມ ລວມທັງການເຂົ້າຮ່ວມກອງປະຊຸມ, ລົງຄະແນນສຽງ, ສະເໜີ ແລະປະກອບຄຳເຫັນດ້ານຕ່າງໆຂອງກຸ່ມ;
6. ສະເໜີເປີດກອງປະຊຸມວິສາມັນ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດລະບຽບຂອງກຸ່ມ;
7. ຮ້ອງຟ້ອງຕໍ່ສານ ກ່ຽວກັບການກະທຳຂອງກຳມະການບໍລິຫານທີ່ເປັນການລະເມີດຕໍ່ສິດ ແລະສ້າງຄວາມເສຍຫາຍແກ່ຜົນປະໂຫຍດຂອງຕົນ ກໍຄືຂອງກຸ່ມທີ່ຕົນເປັນສະມາຊິກ;
8. ສະເໜີໃຫ້ມີການກວດກາຊັບສົມບັດ ແລະບັນຊີການເງິນຂອງກຸ່ມ ໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງກຸ່ມ;
9. ລາອອກຈາກການເປັນສະມາຊິກກຸ່ມ ໂດຍຜ່ານການພິຈາລະນາສິ່ງຄືນຮຸ້ນ ຫຼືຜົນປະໂຫຍດອື່ນ ຕາມກົດລະບຽບຂອງກຸ່ມ;
10. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະກົດລະບຽບຂອງກຸ່ມ.

## ໝວດທີ4
## ສິດ, ໜ້າທີ່ ແລະແຫຼ່ງທຶນຂອງກຸ່ມ

**ມາດຕາ 21 ສິດຂອງກຸ່ມ**

ກຸ່ມມີສິດຕົ້ນຕໍ ດັ່ງນີ້:

1. ດຳເນີນການຜະລິດ ແລະການບໍລິການດ້ານກະສິກຳ ຫຼືເປົ້າໝາຍຂອງກຸ່ມທີ່ໃຫ້ຜົນປະໂຫຍດແກ່ກຸ່ມ ແລະສະມາຊິກກຸ່ມ;
2. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະຈັດກອງປະຊຸມເພື່ອປຶກສາຫາລືຕ່າງໆ ຕາມແຜນການຂອງກຸ່ມ;
3. ຍາດແຍ່ງການຊ່ວຍເຫຼືອດ້ານວິຊາການ ຈາກພາກສ່ວນກ່ຽວຂ້ອງທັງພາກລັດ ແລະພາກເອກະຊົນ;
4. ສະເໜີຂໍນະໂຍບາຍຕ່າງໆຈາກການຈັດຕັ້ງຂອງພາກລັດ ແລະພາກເອກະຊົນພາຍໃນ ຫຼືຕ່າງປະເທດ;
5. ກູ້ຢືມເງິນນຳທະນາຄານ ຫຼືສະຖາບັນການເງິນອື່ນ ເພື່ອມາລົງທຶນໃນກິດຈະການຜະລິດກະສິກຳ;
6. ກຳນົດອັດຕາຮຸ້ນ, ຈຳນວນຮຸ້ນ, ສ້າງສະຫວັດດີການແກ່ສະມາຊິກ, ຄອບຄົວ ແລະສັງຄົມລວມທັງການປົກປ້ອງຜົນປະໂຫຍດອັນຊອບທຳຂອງສະມາຊິກ;
7. ເຂົ້າຮ່ວມການວາງສະແດງ ແລະຈຳໜ່າຍສິນຄ້າທີ່ກຸ່ມຜະລິດໄດ້;
8. ມີສິດອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍກ່ຽວຂ້ອງ.

**ມາດຕາ 22 ໜ້າທີ່ຂອງກຸ່ມ**

ກຸ່ມມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ເຄື່ອນໄຫວຕາມແນວທາງນະໂຍບາຍ, ລະບຽບກົດໝາຍລັດ ແລະລະບຽບຂອງກຸ່ມ;
2. ປັບປຸງກຸ່ມໃຫ້ເຕີບໃຫຍ່ ແລະເຂັ້ມແຂງຢ່າງຕໍ່ເນື່ອງ;
3. ໃຫ້ການຊ່ວຍເຫຼືອດ້ານວິຊາການແກ່ສະມາຊິກ;

4. ລາຍງານປະຈຳປີ ໃຫ້ຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ ແລະອົງການປົກຄອງທ້ອງຖິ່ນຮັບຊາບເປັນປົກກະຕິ;

5. ກໍລະນີມີການປ່ຽນແປງຄະນະກຳມະການບໍລິຫານກຸ່ມ ຕ້ອງລາຍງານເປັນລາຍລັກອັກສອນໃຫ້ຫ້ອງການກະສິກຳແລະປ່າໄມ້ປະຈຳເມືອງ ທີ່ກຸ່ມຕັ້ງຢູ່ຮັບຊາບພາຍໃນ ສິບ ວັນລັດຖະການ;

6. ກໍລະນີໄດ້ຮັບການກູ້ຢືມ ຫຼືໄດ້ຮັບການຊ່ວຍເຫຼືອດ້ານການເງິນຈາກຕ່າງປະເທດ ຕ້ອງໄດ້ແຈ້ງໃຫ້ທະນາຄານແຫ່ງ ສປປ ລາວ ຮັບຊາບຕາມລະບຽບກົດໝາຍ;

7. ປະຕິບັດລະບອບບັນຊີ, ພັນທະ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ ແລະລະບຽບຂອງກຸ່ມ.

**ມາດຕາ 23 ແຫຼ່ງທຶນຂອງກຸ່ມ**

ແຫຼ່ງທຶນຂອງກຸ່ມ ໄດ້ມາຈາກ:

1. ການລົງທະບຽນເປັນສະມາຊິກ;
2. ການປະກອບສ່ວນຂອງສະມາຊິກກຸ່ມ;
3. ດອກເບ້ຍຈາກເງິນຝາກຂອງກຸ່ມ;
4. ກຳໄລຫຼືຜົນການດຳເນີນກິດຈະການຂອງກຸ່ມທີ່ໄດ້ເປັນເງິນ;
5. ການຊ່ວຍເຫຼືອຈາກບຸກຄົນ ຫຼືພາກສ່ວນຕ່າງໆ ທັງພາຍໃນ ແລະຕ່າງປະເທດ;
6. ການກູ້ຢືມ.

## ໝວດທີ 5
## ການຄວບ, ການແຍກ ແລະການຍຸບເລີກກຸ່ມ

**ມາດຕາ 24 ການຄວບ, ການແຍກກຸ່ມ**

ກຸ່ມຕັ້ງແຕ່ ສອງ ກຸ່ມຂຶ້ນໄປ ທີ່ມີຈຸດປະສົງຢາກຄວບເຂົ້າກັນ ແມ່ນສາມາດດຳເນີນການໄດ້ແຕ່ຕ້ອງຜ່ານມະຕິກອງປະຊຸມສະມາຊິກຂອງແຕ່ລະກຸ່ມເຫັນດີເປັນເອກະພາບ ແລະການຮັບຮູ້ຈາກຫ້ອງການກະສິກຳ ແລະປ່າໄມ້ເມືອງທີ່ກຸ່ມນັ້ນຕັ້ງຢູ່.

ກຸ່ມ ໜຶ່ງ ທີ່ມີຈຸດປະສົງຈະແຍກອອກເປັນ ສອງກຸ່ມ ຫຼືຫຼາຍກວ່ານັ້ນ ແມ່ນສາມາດດຳເນີນການໄດ້ ແຕ່ຕ້ອງຜ່ານມະຕິກອງປະຊຸມສະມາຊິກກຸ່ມເຫັນດີເປັນເອກະພາບ ແລະການຮັບຮູ້ຈາກຫ້ອງການກະສິກຳ ແລະປ່າໄມ້ເມືອງທີ່ກຸ່ມນັ້ນຕັ້ງຢູ່.

**ມາດຕາ 25 ການຍຸບເລີກກຸ່ມ**

ກຸ່ມອາດຈະຖືກຍຸບເລີກດ້ວຍເຫດຜົນໃດໜຶ່ງ ດັ່ງນີ້:

1. ກອງປະຊຸມສະມາຊິກມີມະຕິໃຫ້ຍຸບເລີກ;
2. ລົ້ມລະລາຍ ຫຼືຖືກສານຕັດສິນໃຫ້ຍຸບເລີກ;
3. ສຳເລັດກິດຈະການ ຫຼືຍຸບເລີກຕາມເຫດຜົນໃດໜຶ່ງ ທີ່ກຳນົດໄວ້ໃນກົດລະບຽບກຸ່ມ;
4. ຫ້ອງການກະສິກຳ ແລະປ່າໄມ້ເມືອງໃຫ້ຍຸບເລີກ ເນື່ອງຈາກວ່າບໍ່ມີການເຄື່ອນໄຫວ.

## ໝວດທີ 6
## ການຄຸ້ມຄອງ ແລະການກວດກາກຸ່ມ

**ມາດຕາ 26 ການຄຸ້ມຄອງ**

ກະຊວງກະສິກຳ ແລະປ່າໄມ້ ເປັນຜູ້ຄຸ້ມຄອງກຸ່ມ ຢ່າງລວມສູນ ແລະເປັນເອກະພາບໃນຂອບເຂດທົ່ວ

ປະເທດ ໂດຍມອບໃຫ້ຂະແໜງການສາຍຕັ້ງຂອງຕົນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມສົ່ງເສີມກະສິກຳ ແລະສະຫະກອນ;
2. ຂັ້ນແຂວງ ແມ່ນ ຂະແໜງສົ່ງເສີມກະສິກຳ ແລະສະຫະກອນ;
3. ຂັ້ນເມືອງ ແມ່ນ ໜ່ວຍງານສົ່ງເສີມກະສິກຳ ແລະສະຫະກອນ;
4. ຂັ້ນບ້ານ ແມ່ນ ໜ່ວຍງານກະສິກຳ ແລະປ່າໄມ້ບ້ານ.

**ມາດຕາ 27 ສິດ ແລະໜ້າທີ່ຂອງກົມສົ່ງເສີມກະສິກຳ ແລະສະຫະກອນ**

ໃນການຄຸ້ມຄອງກຸ່ມ ກົມສົ່ງເສີມກະສິກຳ ແລະສະຫະກອນ ມີສິດ ແລະໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ກະຊວງກະສິກຳ ແລະປ່າໄມ້ ໃນການສົ່ງເສີມ, ພັດທະນາ ແລະຄຸ້ມຄອງກຸ່ມຢ່າງລວມສູນ ແລະເປັນເອກະພາບໃນທົ່ວປະເທດ;
2. ຄົ້ນຄວ້າ ແລະຜັນຂະຫຍາຍນະໂຍບາຍ ແລະລະບຽບກົດໝາຍ ກ່ຽວກັບການສົ່ງເສີມ, ການພັດທະນາ ແລະຄຸ້ມຄອງກຸ່ມ ແລ້ວນຳສະເໜີຕໍ່ກະຊວງກະສິກຳ ແລະປ່າໄມ້ ເພື່ອພິຈາລະນາຮັບຮອງ;
3. ໂຄສະນາເຜີຍແຜ່ແລະສຶກສາອົບຮົມ ລະບຽບກົດໝາຍ ກ່ຽວກັບວຽກງານກຸ່ມຢ່າງກວ້າງຂວາງ ແລະທົ່ວເຖິງ;
4. ກໍ່ສ້າງ, ຍົກລະດັບບຸກຄະລາກອນທີ່ຮັບຜິດຊອບວຽກງານສົ່ງເສີມ ແລະຄຸ້ມຄອງກຸ່ມທາງດ້ານການເມືອງແນວຄິດ, ຄຸນສົມບັດ, ຈັນຍາບັນ ແລະວິຊາສະເພາະໃຫ້ໜັກແໜ້ນ;
5. ສະໜອງການຝຶກອົບຮົມ ກ່ຽວກັບການຄຸ້ມຄອງ, ບໍລິຫານຈັດການ ແລະດຳເນີນງານໃຫ້ແກ່ກຸ່ມ;
6. ປະສານສົມທົບກັບບັນດາກົມ, ອົງການຈັດຕັ້ງທີ່ກ່ຽວຂ້ອງໃນພາກລັດ, ຜູ້ປະກອບກິດຈະການ ແລະອົງການຈັດຕັ້ງທາງສັງຄົມ ເພື່ອຊຸກຍູ້ສົ່ງເສີມການພັດທະນາກຸ່ມ;
7. ຕິດຕາມຊຸກຍູ້, ແນະນຳການຈັດຕັ້ງປະຕິບັດວຽກງານການສົ່ງເສີມ, ການຄຸ້ມຄອງ ແລະເອື້ອອຳນວຍໃນການກວດສອບກຸ່ມຂອງບັນດາແຂວງ ແລະເມືອງ ໃນຂອບເຂດທົ່ວປະເທດ;
8. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 28 ສິດ ແລະໜ້າທີ່ຂອງຂະແໜງສົ່ງເສີມກະສິກຳ ແລະສະຫະກອນ**

ໃນການຄຸ້ມຄອງກຸ່ມ ຂະແໜງສົ່ງເສີມກະສິກຳ ແລະສະຫະກອນ ມີສິດ ແລະໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ ກົມສົ່ງເສີມກະສິກຳ ແລະສະຫະກອນ, ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ແລະພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນການຊຸກຍູ້ສົ່ງເສີມ, ຄຸ້ມຄອງ ແລະກວດກາກຸ່ມ;
2. ຜັນຂະຫຍາຍ, ໂຄສະນາເຜີຍແຜ່ ແລະສຶກສາອົບຮົມລະບຽບກົດໝາຍ ກ່ຽວກັບການສົ່ງເສີມ, ຄຸ້ມຄອງ ແລະກວດກາກຸ່ມ ພາຍໃນແຂວງ ແລະນະຄອນຫຼວງໃຫ້ທົ່ວເຖິງ;
3. ກໍ່ສ້າງ, ຍົກລະດັບບຸກຄະລາກອນທີ່ຮັບຜິດຊອບວຽກງານສົ່ງເສີມ, ຄຸ້ມຄອງ ແລະກວດກາກຸ່ມ ທາງດ້ານການເມືອງແນວຄິດ, ຄຸນສົມບັດ, ຈັນຍາບັນ ແລະວິຊາສະເພາະໃຫ້ໜັກແໜ້ນ;
4. ສະໜອງການຝຶກອົບຮົມ ກ່ຽວກັບການຄຸ້ມຄອງ, ບໍລິຫານ ແລະດຳເນີນງານໃຫ້ແກ່ກຸ່ມ;
5. ປະສານສົມທົບກັບບັນດາຂະແໜງການ, ອົງການຈັດຕັ້ງທີ່ກ່ຽວຂ້ອງໃນພາກລັດ, ຜູ້ປະກອບກິດຈະການ ແລະອົງການຈັດຕັ້ງທາງສັງຄົມ ເພື່ອຊຸກຍູ້ສົ່ງເສີມການພັດທະນາກຸ່ມຢູ່ພາຍໃນແຂວງ;
6. ຕິດຕາມຊຸກຍູ້, ແນະນຳການຈັດຕັ້ງປະຕິບັດວຽກງານການສົ່ງເສີມ, ການຄຸ້ມຄອງ ແລະເອື້ອອຳນວຍການກວດສອບກຸ່ມຂອງບັນດາເມືອງ;
7. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 29 ສິດ ແລະໜ້າທີ່ຂອງໜ່ວຍງານສົ່ງເສີມກະສິກຳ ແລະສະຫະກອນ**

ໃນການຄຸ້ມຄອງກຸ່ມ ໜ່ວຍງານສົ່ງເສີມກະສິກຳ ແລະສະຫະກອນ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມ, ຄຸ້ມຄອງ ແລະເອື້ອອຳນວຍໃນການກວດກາກຸ່ມຢູ່ພາຍໃນເມືອງ;

2. ຜັນຂະຫຍາຍ, ໂຄສະນາເຜີຍແຜ່ ແລະສຶກສາອົບຮົມລະບຽບກົດໝາຍ ກ່ຽວກັບການສົ່ງເສີມ, ຄຸ້ມຄອງ ແລະກວດກາກຸ່ມ ພາຍໃນເມືອງໃຫ້ທົ່ວເຖິງ;

3. ກໍ່ສ້າງ, ຍົກລະດັບຄວາມຮູ້ບຸກຄະລາກອນໃນແຕ່ລະກຸ່ມ ກ່ຽວກັບການຄຸ້ມຄອງບໍລິຫານ ແລະການຈັດຕັ້ງປະຕິບັດກິດຈະການຂອງກຸ່ມ ໃຫ້ມີມາດຕະຖານທີ່ໜັກແໜ້ນ;

4. ສະໜອງການຝຶກອົບຮົມກ່ຽວກັບການຜະລິດ, ການປຸງແຕ່ງ, ການສ້າງມູນຄ່າເພີ່ມ ແລະການຕະຫຼາດ ໃຫ້ແກ່ກຸ່ມ;

5. ປະສານສົມທົບກັບບັນດາຂະແໜງການ, ອົງການຈັດຕັ້ງທີ່ກ່ຽວຂ້ອງໃນພາກລັດ, ຜູ້ປະກອບກິດຈະການ ແລະອົງການຈັດຕັ້ງທາງສັງຄົມ ເພື່ອຊຸກຍູ້ສົ່ງເສີມການພັດທະນາກຸ່ມຢູ່ພາຍໃນເມືອງ;

6. ຊຸກຍູ້, ຕິດຕາມ, ແນະນຳການຈັດຕັ້ງປະຕິບັດວຽກງານການສົ່ງເສີມ, ການຄຸ້ມຄອງ ແລະເອື້ອອຳນວຍການກວດສອບ ຂອງບັນດາຫົວໜ່ວຍກຸ່ມ ໃນຂອບເຂດທົ່ວເມືອງຢ່າງເປັນປົກກະຕິ;

7. ພິຈາລະນາອະນຸມັດການສະເໜີຂໍສ້າງຕັ້ງກຸ່ມ ແລະອອກໃບອະນຸຍາດເຄື່ອນໄຫວກິດຈະການຂອງກຸ່ມ ລວມທັງຍຸບເລີກກຸ່ມ ໃນກໍລະນີບໍ່ມີການເຄື່ອນໄຫວຕາມມາດຕາ 9 ແລະ 25 ຂອງຂໍ້ຕົກລົງສະບັບນີ້;

8. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 30 ສິດ ແລະໜ້າທີ່ຂອງໜ່ວຍງານກະສິກຳ ແລະປ່າໄມ້ບ້ານ

ໃນການຄຸ້ມຄອງກຸ່ມ ໜ່ວຍງານກະສິກຳ ແລະປ່າໄມ້ບ້ານ ມີສິດ ແລະໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ ແລະສຶກສາອົບຮົມລະບຽບກົດໝາຍ ກ່ຽວກັບວຽກງານກຸ່ມໃຫ້ປະຊາຊົນພາຍໃນບ້ານຂອງຕົນໄດ້ຮັບຊາບ ແລະເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;

2. ຊຸກຍູ້, ຕິດຕາມ ແລະກວດກາ ການເຄື່ອນໄຫວຂອງກຸ່ມໃນຂອບເຂດບ້ານຂອງຕົນ ເພື່ອໃຫ້ເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;

3. ໃຫ້ຄວາມຮ່ວມມື ແລະອຳນວຍຄວາມສະດວກແກ່ການກວດກາກຸ່ມທີ່ຢູ່ໃນຂອບເຂດບ້ານຂອງຕົນ;

4. ລາຍງານສະພາບການເຄື່ອນໄຫວຂອງກຸ່ມ ທີ່ຕັ້ງໃນຂອບເຂດບ້ານຂອງຕົນ ໃຫ້ການຈັດຕັ້ງຂັ້ນເທິງຊາບເປັນປົກກະຕິ;

5. ເຂົ້າຮ່ວມກອງປະຊຸມຂອງກຸ່ມ ແລະປຶກສາຫາລືແກ້ໄຂຂໍ້ຂັດແຍ່ງ ຕາມການຮຽກເຊີນຂອງຄະນະກຳມະການບໍລິຫານກຸ່ມ;

6. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 31 ການກວດກາກຸ່ມ

ການກວດກາ ແມ່ນການຕິດຕາມ, ກວດກາການຈັດຕັ້ງ ແລະການເຄື່ອນໄຫວຂອງກຸ່ມ ຕາມຫຼັກການຂອງການກວດກາ ຊຶ່ງປະກອບດ້ວຍ:

1. ການກວດກາປົກກະຕິ ແມ່ນການກວດກາຕາມແຜນການ ສາມ ເດືອນ, ຫົກ ເດືອນ ແລະປະຈຳປີ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການປົກກະຕິ ແຕ່ມີການແຈ້ງໃຫ້ເປົ້າໝາຍກວດກາຊາບລ່ວງໜ້າກ່ອນ ຢ່າງໜ້ອຍ ເຈັດ ວັນ;

3. ການກວດກາໃນກໍລະນີສຸກເສີນ ແມ່ນການກວດກາອັນຮີບດ່ວນ ແລະບໍ່ຢູ່ໃນແຜນການ.

### ມາດຕາ 32 ເນື້ອໃນການກວດກາ

ການກວດກາກຸ່ມ ຕ້ອງດຳເນີນການຕາມເນື້ອໃນການກວດກາ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດກົດລະບຽບ ແລະມະຕິກອງປະຊຸມສະມາຊິກກຸ່ມ ຂອງກຳມະການບໍລິຫານ, ຄະນະກວດກາ;

2. ກວດກາການເຄື່ອນໄຫວວຽກງານດ້ານການເງິນ, ການບັນຊີ, ການນຳໃຊ້ທຶນ ແລະຊັບສົມບັດຕ່າງໆຂອງກຸ່ມ ລວມທັງການຮ່ວມມືຈາກສະມາຊິກ.

**ມາດຕາ 33 ການແກ້ໄຂຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນກັບກຸ່ມ ເປັນຕົ້ນ ຂໍ້ຂັດແຍ່ງລະຫວ່າງ ສະມາຊິກ, ສະມາຊິກກັບການຈັດຕັ້ງ ແລະ ການຈັດຕັ້ງກຸ່ມດ້ວຍກັນ ຫຼືກັບພາກສ່ວນອື່ນ ສາມາດດຳເນີນການແກ້ໄຂດ້ວຍຂະບວນການ ດັ່ງນີ້:

1. ການໄກ່ເກ່ຍ ຫຼືການປະນີປະນອມກັນ;
2. ແກ້ໄຂທາງດ້ານບໍລິຫານ ໂດຍຂະແໜງກະສິກຳ ແລະປ່າໄມ້ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ;
3. ແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ຮ້ອງຟ້ອງຕໍ່ສານປະຊາຊົນ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 34 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຊຸກຍູ້, ສົ່ງເສີມ, ຄຸ້ມຄອງ ແລະຕິດຕາມ ກວດກາຂະບວນການຜະລິດ ແລະການບໍລິການລວມໝູ່ດ້ານກະສິກຳ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ຈະໄດ້ຮັບການ ຍ້ອງຍໍ ແລະປະຕິບັດນະໂຍບາຍອື່ນ ຕາມຄວາມເໝາະສົມ.

**ມາດຕາ 35 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປະຕິບັດວິໄນ, ປັບໃໝ ແລະລົງໂທດ ຕາມກໍລະນີໜັກ ຫຼືເບົາ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 36 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມສົ່ງເສີມກະສິກຳ ແລະສະຫະກອນ ເປັນເຈົ້າການຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ເປັນບົດແນະນຳ, ປື້ມຄູ່ມືຢ່າງລະອຽດ ແລະປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

ສຳລັບ ບັນດາກຸ່ມທີ່ໄດ້ສ້າງຕັ້ງ ແລະເຄື່ອນໄຫວມາກ່ອນນັ້ນ ໃຫ້ປະກອບເອກະສານສະເໜີຂໍສ້າງຕັ້ງກຸ່ມ ນຳຫ້ອງການກະສິກຳ ແລະປ່າໄມ້ເມືອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ແລະ 10ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 37 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ບັນດານິຕິກຳຂອງ ກະຊວງກະສິກຳ ແລະປ່າໄມ້ ທີ່ອອກກ່ອນນັ້ນ ຫາກມີເນື້ອໃນຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້

ກະຊວງກະສິກຳ ແລະ ປ່າໄມ້
ລັດຖະມົນຕີ

ວິໄລວັນ ພົມເຂ